**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------------

ແຂວງຈຳປາສັກ

ເລກທີ 019 /ຈຂ.ຈສ

ປາກເຊ, ວັນທີ 29/9/2016

# ຄຳແນະນຳ

## ວ່າດ້ວຍ: ການນຳໃຊ້ມາດຕະຖານສາກົນດ້ານການບັນຊີແຫ່ງລັດ ຕາມພື້ນຖານເງິນສົດ ບັນຊີຄູ່

- ອີງຕາມ ກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນສະບັບເລກທີ 529/ກງ ລົງວັນທີ 26 ກຸມພາ 2016 ວ່າດ້ວຍການນຳໃຊ້ ມາດຕະຖານສາກົນດ້ານການບັນຊີແຫ່ງລັດຕາມພື້ນຖານເງິນສົດ.

**ເຈົ້າແຂວງຈຳປາສັກ ອອກຄຳແນະນຳ**

1. ຈຸດປະສົງ

ຄຳແນະນຳສະບັບນີ້ ກຳນົດອອກ ແມ່ນເພື່ອຜັນຂະຫຍາຍເນື້ອໃນບາງມາດຕາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການບັນຊີໃຫ້ຄົບຖ້ວນ ແລະ ຊັດເຈນ ໂດຍສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ເພື່ອແນໃສ່ເຮັດໃຫ້ສາມາດຈັດຕັ້ງປະຕິບັດວຽກງານບັນຊີ ໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ມີປະສິດທິຜົນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

2. ຄຳແນະນຳສະບັບນີ້ ຕ້ອງປະຕິບັດໄປພ້ອມໆກັບກົດໝາຍວ່າດ້ວຍການບັນຊີ, ນອກນັ້ນຍັງໄດ້ກຳນົດໃຫ້ລະອຽດຕື່ມເປັນຕົ້ນ: ແຕ່ລະພະແນກການ,ກົມກອງທົ່ວແຂວງຈຳປາສັກ ຕ້ອງເປັນເອກະພາບປະຕິບັດມາດຕະຖານສາກົນດ້ານການບັນຊີແຫ່ງລັດ ຕາມພື້ນຖານເງິນສົດ ( ບັນຊີຄູ່ ), ກຳນົດປຶ້ມບັນຊີ, ກຳນົດແບບການລາຍງານ ເອກະສານລາຍງານການເງິນ,ແລະ ກຽມຄວາມພ້ອມເພື່ອບັນຈຸບຸກຄະລະກອນ ນາຍບັນຊີ,ນາຍຄັງເງິນສົດໃຫ້ເໝາະສົມ *ກັບໜ້າວຽກ, ກຳນົດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ.*

3. ຄາດໝາຍ:

3.1 ເຫັນດີ ໃຫ້ພະແນກການ,ກົມກອງອ້ອມຂ້າງແຂວງ ແລະ 10 ຕົວເມືອງ ນຳໃຊ້ ມາດຕະຖານສາກົນດ້ານການບັນຊີແຫ່ງລັດ ຕາມພື້ນຖານເງິນສົດ ( ບັນຊີຄູ່ ) ທີ່ສະພາມາດຕະຖານສາກົນດ້ານການບັນຊີແຫ່ງລັດ ໄດ້ຮັບຮອງ ແລະ ປະກາດໃຊ້ ເພື່ອເປັນບ່ອນອີງ ໃຫ້ຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ ແລະ ກອງທຶນຂອງລັດ ໃນການຈັດຕັ້ງປະຕິບັດວຽກງານບັນຊີຂອງພະແນກການ, ກົມກອງຕົນ.

3.2 ຫົວໜ່ວຍງົບປະມານລັດ ໃນຂອບເຂດທົ່ວແຂວງ ຕ້ອງໄດ້ກຽມຄວາມພ້ອມທຸກດ້ານ, ນັບທັງງົບປະມານ, ອຸປະກອນຮັບໃຊ້ ແລະ ບຸກຄະລະກອນ ເພື່ອບັນຈຸສັບຊ້ອນເຂົ້າໃສ່ວຽກງານການບັນຊີແຫ່ງລັດໃຫ້ ເກີດມີປະສິດທິຜົນສູງສຸດ ແລະ ວຽກດັ່ງກ່າວນີ້ ແມ່ນເປັນເອກະພາບ ໃຫ້ເລີ່ມປະຕິບັດ ແຕ່ວັນທີ 1 ມັງກອນ 2017 ເປັນຕົ້ນໄປ.

3.3 ຫົວໜ່ວຍຖືບັນຊີແຫ່ງລັດ ຕ້ອງສ້າງປຶ້ມບັນຊີ, ປຶ້ມຕິດຕາມ,ໃບດຸ່ນດ່ຽງ ແລະ ສ້າງເອກະສານລາຍງານການເງິນຂອງຕົນໃຫ້ຖືກຕ້ອງ ສອດຄ່ອງ ຕາມຮູບແບບທີ່ກະຊວງການເງິນກຳນົດອອກ.

3.4 ຫົວໜ່ວຍງົບປະມານລັດໃນຂອບເຂດທົ່ວແຂວງ ຫາກມີບັນຫາໃດພົບຄວາມຫຍຸ້ງຍາກ ໃນການບັນທຶກຈົດກ່າຍບັນຊີສະບັບໃໝ່ນີ້ ຕ້ອງລາຍງານໃຫ້ພະແນກການເງິນແຂວງ ( ຫ້ອງບັນຊີ ) ຊາບນຳ ເພື່ອຊ່ວຍແນະນຳໃນການຈັດຕັ້ງປະຕິບັດຕົວຈິງ.

3.5 ເອກະສານລາຍງານການເງິນປະຈຳເດືອນ, ປະຈຳປີ ຂອງບັນດາພະແນກການອ້ອມຂ້າງແຂວງ, ແລະ 10 ເມືອງ ຕ້ອງໄດ້ສົ່ງໃຫ້ຫ້ອງບັນຊີເປັນປົກະຕິໃນແຕ່ລະເດືອນ ຊ້າສຸດບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ ເພື່ອຕິດຕາມກວດກາ ເລີ່ມແຕ່ເດືອນ ມັງກອນ 2017 ເປັນຕົ້ນໄປ.

3.6 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ແມ່ນປະຕິບັດຕາມ ໝວດ 3 ມາດຕາ 29,ມາດຕາ 30 ຂອງຄຳແນະນຳວ່າດ້ວຍ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 531/ກງ ລົງວັນທີ 26 ກຸມພາ 2016 ຢ່າງເຂັ້ມງວດ.

3.7 ມອບໃຫ້ພະແນກການເງິນແຂວງຈຳປາສັກ ຫ້ອງບັນຊີ, ຄັງເງິນແຫ່ງຊາດປະຈຳແຂວງ, ຫ້ອງງົບປະມານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ລົງຊ່ວຍແນະນຳ,ຊຸກຍູ້, ຕິດຕາມກວດກາ ແລະ ປະເມີນຜົນໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ເກີດປະສິດທິຜົນສູງສຸດ.

ດັ່ງນັ້ນ, ຈຶ່ງອອກຄຳສັ່ງແນະນຳໃຫ້ທຸກພາກສ່ວນທຸກພາກສ່ວນ, ຫົວໜ່ວຍງົບປະມານລັດທົ່ວແຂວງຈຳປາສັກ ຄຳແນະນຳສະບັບນີ້ຢ່າງເຂັ້ມງວດ ແລະ ຄຳແນະນຳສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ມື້ໄດ້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ ຈຳປາສັກ

ບົວສອນ ວົງສອງຄອນ